ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກົມປູກຝັງ

ເລກທີ 2880/ກປຝ

ນະຄອນຫລວງວຽງຈັນ, ວັນທີ 11 DEC 2019

# ບົດແນະນຳ
# ກ່ຽວກັບ ຫລັກການ ແລະ ການຢັ້ງຢືນສຸຂານາໄມພືດ ສຳຫຼັບການ ສົ່ງອອກ ແລະ ສົ່ງອອກຕໍ່ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ

- ອີງຕາມ ກົດໝາຍ ວ່າດ້ວຍ ການປ້ອງກັນ ແລະ ການກັກກັນພືດ (ສະບັບປັບປຸງ), ເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016;
- ອີງຕາມ ຄຳສັ່ງວ່າດ້ວຍການອຳນວຍຄວາມສະດວກໃຫ້ແກ່ການນຳເຂົ້າ-ສົ່ງອອກ, ການນຳເຂົ້າຊົ່ວຄາວ, ການຜ່ານແດນ ແລະ ການເຄື່ອນຍ້າຍສິນຄ້າຢູ່ ສປປລາວ, ເລກທີ 12/ນຍ, ລົງວັນທີ 16/10/2019;
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີ ວ່າດ້ວຍ ມາດຕະການສຸຂານາໄມພືດສຳລັບການສົ່ງອອກ ແລະ ສົ່ງອອກຕໍ່ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ສະບັບເລກທີ 2986/ກປ, ລົງວັນທີ 28/06/2019.

ເພື່ອຄຸ້ມຄອງວຽກງານ ການອອກໃບຢັ້ງຢືນສຸຂານາໄມພືດ ສຳຫຼັບການສົ່ງອອກ ແລະ ການສົ່ງອອກຕໍ່ ໃຫ້ແກ່ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ໃຫ້ສອດຄ່ອງກັບ ກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ ວ່າດ້ວຍ ການປ້ອງກັນ ແລະ ການກັກກັນພືດ ຂອງ ສປປລາວ, ພ້ອມທັງປະຕິບັດຕາມສັນຍາ, ສົນທິສັນຍາທີ່ ສປປລາວ ເປັນພາຄີ ແລະ ຂໍ້ກຳນົດເງື່ອນໄຂການນຳເຂົ້າ ຂອງປະເທດຄູ່ຄ້າ.

## ກົມປູກຝັງ, ຈຶ່ງອອກບົດແນະນຳ ດັ່ງນີ້:

## I. ຫຼັກການການອອກໃບຢັ້ງຢືນສຸຂານາໄມພືດສຳຫຼັບສົ່ງອອກ

ການຢັ້ງຢືນສຸຂານາໄມພືດ ສຳລັບການສົ່ງອອກ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ແມ່ນການຈັດຕັ້ງປະຕິບັດມາດຕະການສຸຂານາໄມພືດ ທີ່ປະເທດຄູ່ຄ້າ ກຳນົດຕາມມາດຕະຖານສາກົນດ້ານສຸຂານາໄມພືດທີ່ກ່ຽວຂ້ອງ ເປັນຕົ້ນ ການຈັດການຄວາມສ່ຽງສັດຕູພືດ, ການນຳໃຊ້ມາດຕະການສຸຂານາໄມພືດ, ການກວດກາ ແລະ ການຢັ້ງຢືນສຸຂານາໄມພືດ ແລະ ການເຈລະຈາເຕັກນິກເປີດຕະຫຼາດ.

### 1.1. ຂັ້ນຕອນການສະເໜີຂໍອອກໃບຢັ້ງຢືນສຸຂານາໄມພືດ

ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ທີ່ມີຈຸດປະສົງຂໍໃບຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກ ໃຫ້ພິວພັນເອົາໃບຄຳຮ້ອງຂໍໃບຢັ້ງຢືນສຸຂານາໄມພືດ ຕາມທີ່ໄດ້ກຳນົດໄວ້ໃນແບບຟອມ ກກພ 01, ກກພ 01.1 ແລະ ແບບຟອມ ກກພ 02 (ເອກະສານຄັດຊ້ອນທ້າຍ 01), ນຳກົມປູກຝັງ ຫຼື ຂະແໜງປູກຝັງ ແຂວງ, ນະຄອນຫຼວງ.

ເອກະສານປະກອບເພື່ອສະເໜີຂໍໃບຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກ ມີດັ່ງນີ້:

1. ໃບຄຳຮ້ອງແບບຟອມ ກກພ 01, ກກພ 01.1 ແລະ ແບບຟອມ ກກພ 02 (ເອກະສານຊ້ອນທ້າຍ 01)
2. ກະກຽມຊຸດສິນຄ້າພືດ, ພາຊະນະບັນຈຸຫຸ້ມຫໍ່ຕ້ອງແຂງແຮງ ແລະ ເໝາະສົມທີ່ຈະສົ່ງອອກ ໃຫ້ສອດຄ່ອງ ແລະ ປະຕິບັດຕາມເງື່ອນໄຂນຳເຂົ້າຂອງປະເທດຄູ່ຄ້າ;
3. ແຈ້ງບັນຊີລາຍຊື່ພືດສົ່ງອອກໃນແຕ່ລະພາຊະນະຫຸ້ມຫໍ່ຕ່າງໆໃຫ້ຖືກຕ້ອງກັບປະເພດ, ຊະນິດ ແລະ ປະລິມານ ໃຫ້ຖືກຕ້ອງ;
4. ບໍ່ໃຫ້ມີພືດອື່ນ ຫຼື ວັດຖຸຕ່າງໆປົນ ທີ່ບໍ່ຖືກຕ້ອງກັບບັນຊີລາຍຊື່ພືດສົ່ງອອກ ໃນໃບຄຳຮ້ອງຂໍໃບຢັ້ງຢືນ ສຸຂານາໄມພືດ;
5. ເອກະສານອື່ນທີ່ກ່ຽວຂ້ອງ.

## 1.2. ວິທີການ ແລະ ຂັ້ນຕອນການອອກໃບຢັ້ງຢືນສຸຂານາໄມພືດ ສຳລັບການສົ່ງອອກ

1. ເຈົ້າໜ້າທີ່ກັກກັນພືດ ກວດກາເອກະສານສຳລັບ ການຂໍໃບຢັ້ງຢືນສຸຂານາໄມພືດສຳລັບສົ່ງອອກ ຕ້ອງ ປະກອບມີເອກະສານ ດັ່ງນີ້:
   - ໃບຄຳຮ້ອງຂໍໃບຢັ້ງຢືນສຸຂານາໄມພືດ, ບັນຊີລາຍຊື່ຊຸດສິນຄ້າພືດ ຕາມແບບຟອມ ກກພ 01 ແລະ ແບບຟອມ ກກພ 01.1 (ເອກະສານຊ້ອນທ້າຍ 01);
   - ໃບຢັ້ງຢືນການກວດກາ ພືດ ແລະ ຜະລິດຕະພັນພືດ ຕາມແບບຟອມ ກກພ 02 (ເອກະສານຊ້ອນທ້າຍ 01);
   - ເອກະສານອື່ນຕາມເງື່ອນໄຂການສົ່ງອອກຂອງ ສປປລາວ ແລະ ເງື່ອນໄຂການນຳເຂົ້າຂອງປະເທດຄູ່ຄ້າ ເຊັ່ນ: ໃບຂໍອະນຸຍາດນຳເຂົ້າໃນກໍລະນີແມ່ນພືດ ແລະ ຜະລິດຕະພັນພືດຕ້ອງຫ້າມນຳເຂົ້າຂອງປະເທດຄູ່ ຄ້າ;
   - ສຳເນົາ ໃບອະນຸຍາດດຳເນີນກິດຈະການ ກະສິກຳ ແລະ ປ່າໄມ້ (ກໍລະນີສົ່ງອອກເພື່ອການຄ້າ);
   - ໃບແຈ້ງລາຄາ ແລະ ໃບແຈ້ງລາຍການສິນຄ້າ;
   - ໃບຢັ້ງຢືນການຣົມຢາຂ້າເຊື້ອ ຫລື ການເຮັດອານາໄມ (ກໍລະນີເງື່ອນໄຂຂອງປະເທດຄູ່ຄ້າກຳນົດ);
   - ໃນກໍລະນີ ພືດທີ່ຈະສົ່ງອອກ ນອນຢູ່ໃນບັນຊີຜະລິດຕະພັນເຄື່ອງປ່າຂອງດົງ ແລະ ສິ່ງຕ້ອງຫ້າມສົ່ງອອກ ຂອງ ສປປລາວ, ຜູ້ສົ່ງອອກ ຕ້ອງມີໃບຢັ້ງຢືນ CITES ຈາກຂະແໜງການກ່ຽວຂ້ອງ ເພື່ອໃຊ້ເປັນຫຼັກ ຖານໃນການອອກໃບຢັ້ງຢືນສຸຂານາໄມພືດ;
2. ໃນກໍລະນີພືດສົ່ງອອກ ນອນຢູ່ໃນບັນຊີ ຊັບພະຍາກອນທຳມະຊາດທີ່ເປັນຢາ ໃຫ້ປະຕິບັດຕາມຄຳສັ່ງ ແນະນຳວ່າດ້ວຍ ການຈັດຕັ້ງປະຕິບັດດຳລັດຂອງນາຍົກລັດຖະມົນຕີກ່ຽວກັບຊັບພະຍາກອນທຳມະຊາດທີ່ ເປັນຢາ ເລກທີ 155/ນຍ, ລົງວັນທີ 30 ກັນຍາ 2003, ເລກທີ 252/ກຊສ, ລົງວັນທີ 6/6/2007;
3. ກວດກາບັນດາກົດລະບຽບ ແລະ ຂໍ້ກຳນົດເງື່ອນໄຂດ້ານສຸຂານາໄມພືດ ສຳລັບການນຳເຂົ້າຂອງປະເທດຄູ່ ຄ້າ, ຜູ້ສົ່ງອອກ ຕ້ອງປະຕິບັດຕາມເງື່ອນໄຂທີ່ກຳນົດໃນເອກະສານດັ່ງກ່າວ, ໃນກໍລະນີໃບອະນຸຍາດນຳເຂົ້າ ຂອງປະເທດຄູ່ຄ້າ ໄດ້ກຳນົດເງື່ອນໄຂດ້ານສຸຂານາໄມພືດເພີ່ມເຕີມ ຕ້ອງແຈ້ງໃຫ້ເຈົ້າໜ້າທີ່ກັກກັນພືດ ຮັບ ຊາບທັນທີ;
4. ຫຼັງຈາກກວດກາເອກະສານຄົບຖ້ວນ ແລະ ຖືກຕ້ອງແລ້ວ, ໃຫ້ເຈົ້າໜ້າທີ່ກັກກັນພືດ ອອກເລກຂາເຂົ້າ ເອກະສານ; ໃນກໍລະນີເອກະສານບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນ , ເຈົ້າໜ້າທີ່ກັກກັນພືດ ຕ້ອງແຈ້ງໃຫ້ຜູ້ສົ່ງ ອອກ ແກ້ໄຂທັນທີ ແລະ ພ້ອມທັງປະກອບເອກະສານໃຫ້ຄົບຖ້ວນ ແລະ ຖືກຕ້ອງ ເພື່ອເປັນບ່ອນອີງໃຫ້ ແກ່ການອອກໃບຢັ້ງຢືນສຸຂານາໄມພືດ;

5. ກ່ອນສົ່ງອອກຊຸດສິນຄ້າທຸກຄັ້ງ, ຜູ້ສົ່ງອອກຕ້ອງແຈ້ງຄວາມພ້ອມ ພ້ອມທັງກະກຽມຊຸດສິນຄ້າ ຖືກຕ້ອງ ແລະ ຄົບຖ້ວນ ເພື່ອອຳນວຍຄວາມສະດວກໃຫ້ແກ່ ພະນັກງານ ຫຼື ເຈົ້າໜ້າທີ່ກັກກັນພືດ ດຳເນີນການກວດກາຕາມຫຼັກການວິຊາການ;
6. ການກວດກາສັດຕູພືດ ໃນຊຸດສິນຄ້າໃຫ້ປະຕິບັດຕາມ ມາດຕະຖານສາກົນດ້ານມາດຕະການສຸຂານາໄມພືດ ເລກທີ 31 (ISPM31) ໂດຍ ການສຸ່ມເກັບຕົວຢ່າງ ພືດ ແລະ ຜະລິດຕະພັນພືດ ເພື່ອກວດຫາສັດຕູພືດ ໃນສະຖານທີ່ກຳນົດໄວ້;
7. ກໍລະນີກວດບໍ່ພົບສັດຕູພືດ ຫຼື ສຳເລັດການກຳຈັດສັດຕູພືດແລ້ວ ໃຫ້ເຈົ້າໜ້າກັກກັນພືດ ບັນທຶກຂໍ້ມູນພ້ອມທັງເຮັດບົດລາຍງານ ເພື່ອຄົ້ນຄວ້າ ແລະ ພິຈາລະນາອອກໃບຢັ້ງຢືນສຸຂານາໄມພືດ;
8. ໃນກໍລະນີ ກວດພົບສັດຕູພືດກັກກັນ ຂອງປະເທດຄູ່ຄ້າ ໃຫ້ເຈົ້າໜ້າທີ່ກັກກັນພືດ ບັນທຶກຂໍ້ມູນພ້ອມທັງແນະນຳໃຫ້ຜູ້ປະກອບການ ກຳຈັດສັດຕູພືດ ດ້ວຍວິທີທີ່ເໝາະສົມ ຖ້າຫາກບໍ່ສາມາດກຳຈັດສັດຕູພືດໄດ້ໃຫ້ປະຕິເສດການອອກໃບຢັ້ງຢືນສຸຂານາໄມພືດ ພ້ອມທັງເຮັດບົດລາຍງານເພື່ອເປັນຫຼັກຖານ;
9. ໃນກໍລະນີຫາກປະເທດຄູ່ຄ້າຕ້ອງການຂໍ້ມູນແຈ້ງເພີ່ມເຕີມ (Additional Declaration), ພະນັກງານ ຫຼື ເຈົ້າໜ້າທີ່ກັກກັນພືດ ທີ່ຮັບຜິດຊອບການອອກໃບຢັ້ງຢືນສຸຂານາໄມພືດ ຕ້ອງລະບຸແຈ້ງໃນໃບຢັ້ງຢືນສຸຂານາໄມພືດ ຕາມຂໍ້ກຳນົດເງື່ອນໄຂການນຳເຂົ້າຂອງປະເທດຄູ່ຄ້າ;
10. ຜູ້ມີສິດລົງລາຍເຊັນໃສ່ໃບຢັ້ງຢືນສຸຂານາໄມພືດ ຕ້ອງກວດກາຄວາມຖືກຕ້ອງຂອງໃບຢັ້ງຢືນສຸຂານາໄມພືດ ດັ່ງນີ້:
    - ໃບຢັ້ງຢືນສຸຂານາໄມພືດ ຖືກຕ້ອງ ແລະ ຄົບຖ້ວນ ໃຫ້ລົງລາຍເຊັນ
    - ກໍລະນີບໍ່ຖືກຕ້ອງໃຫ້ແຈ້ງ ພະນັກງານ ຫຼື ເຈົ້າໜ້າທີ່ກັກກັນພືດ ຜູ້ຮັບຜິດຊອບອອກໃບຢັ້ງຢືນສຸຂານາໄມພືດດັ່ງກ່າວ ເພື່ອດຳເນີນການແກ້ໄຂ;
11. ເກັບຄ່າທຳນຽມ ແລະ ຄ່າບໍລິການ ສຳລັບການກວດກາ, ເກັບຕົວຢ່າງ, ການວິໄຈ, ບຳບັດ, ອອກໃບຢັ້ງຢືນສຸຂານາໄມພືດ ແລະ ວຽກງານອື່ນ ຕາມທີ່ລະບຸໄວ້ໃນລັດຖະບັນຍັດ ຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການທີ່ປະກາດໃຊ້ໃນແຕ່ລະໄລຍະ;
12. ສົ່ງມອບໃບຢັ້ງຢືນສຸຂານາໄມພືດ ໃຫ້ແກ່ຜູ້ສົ່ງອອກ ສະບັບຕົ້ນ (ORIGINAL) 01 ສະບັບ (ເອກະສານຊ້ອນທ້າຍ 03) ແລະ ສຳເນົາ (COPY) 01 ສະບັບ (ເອກະສານຊ້ອນທ້າຍ 04);
13. ເຈົ້າໜ້າທີ່ກັກກັນພືດ ເກັບມ້ຽນໃບຢັ້ງຢືນສຸຂານາໄມພືດ ສຳເນົາ (COPY) 01 ສະບັບ (ເອກະສານຊ້ອນທ້າຍ 04) ແລະ ເອກະສານອື່ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 27 ຂອງຂໍ້ຕົກລົງວ່າດ້ວຍມາດຕະການສຸຂານາໄມພືດ ສຳລັບການສົ່ງອອກ ແລະ ສົ່ງອອກຕໍ່ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ສະບັບເລກທີ 2986/ກປ, ລົງວັນທີ 28/06/2019;
14. ໃນກໍລະນີການສົ່ງອອກ ພືດ, ຜະລິດຕະພັນພືດ ຈາກແຂວງທີ່ເປັນແຫຼ່ງກຳເນີດສິນຄ້າ ແລະ ຍັງບໍ່ທັນໄດ້ຮັບການມອບສິດໃນການອອກໃບຢັ້ງຢືນສຸຂານາໄມພືດ, ໃຫ້ເຈົ້າໜ້າທີ່ກັກກັນພືດດຳເນີນຂັ້ນຕອນການກວດກາ ແລະ ບັນທຶກລາຍງານຕາມ ແບບຟອມ ກກພ02 (ເອກະສານຊ້ອນທ້າຍ 01) ຫຼັງຈາກນັ້ນໃຫ້ນຳສົ່ງຊຸດເອກະສານດັ່ງກ່າວ ໃຫ້ຂະແໜງປູກຝັງແຂວງ, ນະຄອນຫຼວງ ຫຼື ຂະແໜງກັກກັນພືດປະຈຳດ່ານຊາຍແດນ ແລະ ສະໜາມບິນສາກົນ ທີ່ໄດ້ຮັບມອບສິດອອກໃບຢັ້ງຢືນສຸຂານາໄມພືດ ຈາກກົມປູກຝັງ ເພື່ອ ອອກໃບຢັ້ງຢືນສຸຂານາໄມພືດນັ້ນ.

## II. ຫຼັກການການອອກໃບຢັ້ງຢືນສຸຂານາໄມພືດສຳຫຼັບສົ່ງອອກຕໍ່

ການຢັ້ງຢືນສຸຂານາໄມພືດ ສຳລັບການສົ່ງອອກຕໍ່ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ແມ່ນການປະຕິບັດມາດຕະການດ້ານສຸຂານາໄມພືດ ຕໍ່ກັບຊຸດສິນຄ້າຈາກປະເທດໃດໜຶ່ງ ແລ້ວສົ່ງອອກຕໍ່ ໄປຍັງປະເທດອື່ນບົນພື້ນຖານ ມີຄວາມສອດຄ່ອງກັບເງື່ອນໄຂດ້ານສຸຂານາໄມພືດຂອງປະເທດຄູ່ຄ້າ ເປັນຕົ້ນແມ່ນການກວດກາ,

ການບຳບັດ ແລະ ການຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກຕໍ່ ຊຶ່ງຊຸດສິນຄ້າດັ່ງກ່າວ ມີການເກັບມ້ຽນ, ແຍກ, ລວມເຂົ້າກັບຊຸດສິນຄ້າອື່ນ ຫຼື ມີການປ່ຽນແປງການບັນຈຸການຫຸ້ມຫໍ່.

### 2.1. ຂັ້ນຕອນການສະເໜີຂໍອອກໃບຢັ້ງຢືນສຸຂານາໄມພືດສຳລັບສົ່ງອອກຕໍ່

ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງທີ່ມີຈຸດປະສົງ ເພື່ອຂໍໃບຢັ້ງຢືນສຸຂານາໄມພືດສຳລັບສົ່ງອອກຕໍ່ ຕ້ອງຂໍອະນຸຍາດນຳກົມປູກຝັງ ໂດຍປະຕິບັດຕາມຂໍ້ຕົກລົງວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້ບັນຊີພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ທີ່ຕ້ອງໄດ້ຂໍອະນຸຍາດນຳເຂົ້າ ສປປລາວ ໂດຍຜ່ານການວິໄຈຄວາມສ່ຽງສັດຕູພືດ ສະບັບເລກທີ 2987/ກປ, ລົງວັນ 28 ມິຖຸນາ 2019;

ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ທີ່ມີຈຸດປະສົງຂໍໃບຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກຕໍ່ ໃຫ້ພິວພັນເອົາໃບຄຳຮ້ອງຂໍໃບຢັ້ງຢືນສຸຂານາໄມພືດສຳລັບສົ່ງອອກຕໍ່ ຕາມທີ່ໄດ້ກຳນົດໄວ້ໃນແບບຟອມ ກກພ 03 ແລະ ກກພ 04 (ເອກະສານຄັດຊ້ອນທ້າຍ 02), ນຳກົມປູກຝັງ ຫຼື ຂະແໜງປູກຝັງ ແຂວງ, ນະຄອນຫຼວງ.

ເອກະສານປະກອບເພື່ອສະເໜີຂໍໃບຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກຕໍ່ ມີດັ່ງນີ້:

1. ໃບຢັ້ງຢືນສຸຂານາໄມພືດສຳລັບສົ່ງອອກຕົ້ນສະບັບ ອອກໂດຍອົງການປ້ອງກັນພືດແຫ່ງຊາດຂອງປະເທດແຫຼ່ງກຳເນີດສິນຄ້າ ຫຼື ປະເທດ ຕົ້ນທາງ;
2. ໃບຄຳຮ້ອງແບບຟອມ ກກພ 03 ແລະ ກກພ 04 (ເອກະສານຄັດຊ້ອນທ້າຍ 02)
3. ສ່ວນເອກະສານ ແລະ ຂັ້ນຕອນອື່ນໃຫ້ປະຕິບັດຄືກັນກັບການອອກໃບຢັ້ງຢືນສຸຂານາໄມພືດສຳລັບສົ່ງອອກ

### 2.2. ວິທີການ ແລະ ຂັ້ນຕອນການອອກໃບຢັ້ງຢືນສຸຂານາໄມພືດ ສຳລັບການສົ່ງອອກຕໍ່.

ການອອກໃບຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກຕໍ່ແມ່ນການປະຕິບັດໃນກໍລະນີ ຊຸດສິນຄ້າໄດ້ມີປ່ຽນແປງຈາກຮູບຮ່າງລັກຊະນະເດີມ ເຊັ່ນ: ຫຸ້ມຫໍ່ຄືນໃໝ່, ເກັບໄວ້ຕູ້ຄອນເທນເນີເກົ່າ ຫຼື ໃໝ່ ມີການແຍກ ຫຼື ລວມເຂົ້າກັນ ໃນຊຸດສິນຄ້າໃດໜຶ່ງ;

1. ເອກະສານສຳລັບຂໍໃບຢັ້ງຢືນສຸຂານາໄມພືດ ສຳລັບການສົ່ງອອກຕໍ່ ມີດັ່ງນີ້:
   - ໃບຢັ້ງຢືນສຸຂານາໄມພືດສຳລັບສົ່ງອອກຕົ້ນສະບັບອອກໂດຍອົງການປ້ອງກັນພືດແຫ່ງຊາດຂອງປະເທດແຫຼ່ງ ກຳເນີດສິນຄ້າ ຫຼື ປະເທດ ຕົ້ນທາງ;
   - ໃບຄຳຮ້ອງຂໍໃບຢັ້ງຢືນສຸຂານາໄມພືດ ຕາມແບບຟອມ ກກພ03 (ເອກະສານຊ້ອນທ້າຍ 02);
   - ໃບຢັ້ງຢືນການກວດກາ ພືດ ແລະ ຜະລິດຕະພັນພືດ ຕາມແບບຟອມ ກກພ04 (ເອກະສານຊ້ອນທ້າຍ 02 ):
   - ເອກະສານອື່ນທີ່ກ່ຽວຂ້ອງຕາມເງື່ອນໄຂດ້ານສຸຂານາໄມພືດ ສຳລັບການນຳເຂົ້າຂອງ ສປປລາວ ;
2. ການອອກໃບຢັ້ງຢືນສຸຂານາໄມພືດສຳລັບສົ່ງອອກຕໍ່ ບໍ່ສາມາດອອກໄດ້ ຖ້າຫາກພົບວ່າ ຊຸດສິນຄ້າ ມີຄວາມສ່ຽງຕໍ່ການຕິດແປດສັດຕູພືດ, ການຕົກຄ້າງຂອງສານເຄມີເກີນຄ່າມາດຕະຖານ, ສູນເສຍສະພາບຄວາມປອດໄພສຸຂານາໄມພືດ ຫຼື ມີການປ່ຽນແປງຈາກສະພາບເດີມ ຫຼື ຜ່ານຂະບວນການປຸງແຕ່ງ;
3. ສ່ວນຂັ້ນຕອນອື່ນ, ຜູ້ສົ່ງອອກຕໍ່ ຕ້ອງປະຕິບັດຄືກັນກັບ ວິທີການ ແລະ ຂັ້ນຕອນການອອກໃບຢັ້ງຢືນສຸຂານາໄມພືດ ສຳລັບການສົ່ງອອກ ຂ້າງເທິງນີ້.

## III. ການປະຕິເສດ ການອອກໃບຢັ້ງຢືນສຸຂານາໄມພືດ ສຳລັບການສົ່ງອອກ ແລະ ສົ່ງອອກຕໍ່

ການປະຕິເສດ ການອອກໃບຢັ້ງຢືນສຸຂານາໄມພືດ ສຳລັບການສົ່ງອອກ ແລະ ສົ່ງອອກຕໍ່ ສາມາດປະຕິບັດໃນກໍລະນີ ດັ່ງລຸ່ມນີ້:

**1. ກວດພົບສິນຄ້າພືດ, ວັດຖຸຕ້ອງຄວບຄຸມ ຫຼື ວັດຖຸອື່ນ ທີ່ບໍ່ໄດ້ແຈ້ງໃນໃບຄາຮ້ອງຂໍໃບຢັ້ງຢືນສຸຂານາໄມພືດສຳລັບສົ່ງອອກ ແລະ ສົ່ງອອກຕໍ່ ໃນກໍລະນີດັ່ງນີ້:**

**ກ. ກວດພົບຢູ່ສະຖານທີ່ລົງກວດກາສິນຄ້າ**

- ຄັ້ງທີໜຶ່ງ 01 ຄັດພືດນັ້ນອອກທັງໝົດ ແລະ ອອກໃບຢັ້ງຢືນສຸຂານາໄມພືດ
- ຄັ້ງທີສອງ 02 ເມື່ອກະທຳຜິດຊ້ຳພາຍໃນເວລາສາມສິບວັນ (30) ນັບແຕ່ວັນກວດພົບຄັ້ງທີໜຶ່ງ ໃຫ້ປະຕິເສດການອອກໃບຢັ້ງຢືນສຸຂານາໄມພືດ ສຳລັບການສົ່ງອອກ ຫຼື ສົ່ງອອກຕໍ່ ໃຫ້ກັບສິນຄ້າທັງໝົດ ແລະ ໃຫ້ຜູ້ສົ່ງອອກ ຫຼື ສົ່ງອອກຕໍ່ ຍື່ນໃບສະເໜີຄືນໃໝ່ເພື່ອດຳເນີນການກວດກາ ແລະ ຢັ້ງຢືນສຸຂານາໄມພືດຕາມຂັ້ນຕອນຄືນ ໃໝ່ທັງໝົດ. ການສົ່ງອອກ ຫຼື ການສົ່ງອອກຕໍ່ ໃນຄັ້ງຕໍ່ໄປ ໃຫ້ດຳເນີນການກວດຊຸດສິນຄ້າ ເຂັ້ມງວດ ແລະ ຖີ່ຂຶ້ນກວ່າເກົ່າ ເປັນເວລາສາມເດືອນ;
- ຄັ້ງທີສາມ 03 ເມື່ອກະທຳຄວາມຜິດຊ້ຳໃນໄລຍະການກວດສິນຄ້າ ຕິດຕໍ່ກັນສິບຄັ້ງເປັນເວລາສາມເດືອນ (03) ໃຫ້ປະຕິເສດການອອກໃບຢັ້ງຢືນສຸຂານາໄມພືດ ສຳລັບການສົ່ງອອກ ຫຼື ສົ່ງອອກຕໍ່ ພ້ອມທັງປັບໄໝຕາມລະບຽບກົດໝາຍ.

**ຂ. ກໍລະນີປະເທດນຳເຂົ້າ ຫຼື ປະເທດຄູ່ຄ້າ ແຈ້ງເຕືອນເປັນທາງການ**

- ໃຫ້ໂຈະການອອກໃບຢັ້ງຢືນສຸຂານາໄມພືດໃຫ້ກັບຜູ້ສົ່ງອອກ ຫຼື ສົ່ງອອກຕໍ່ ທີ່ຖືກແຈ້ງເຕືອນຈາກປະເທດນຳເຂົ້າເປັນເວລາສິບຫ້າວັນ (15) ຈົນກ່ວາໄດ້ຮັບການປັບປຸງ ແລະ ແກ້ໄຂຈຶ່ງສາມາດສົ່ງອອກ ຫຼື ສົ່ງອອກຕໍ່ໄດ້.

**2. ກວດພົບການແຈ້ງປະລິມານ ຫຼື ນ້ຳໜັກຂອງ ພືດ ແລະ ຜະລິດຕະພັນພືດ ບໍ່ກົງກັບໃບຢັ້ງຢືນສຸຂານາໄມພືດ ສຳລັບການສົ່ງອອກ ຫຼື ສົ່ງອອກຕໍ່ ໃນເວລາສົ່ງອອກຕົວຈິງ ໃນກໍລະນີດັ່ງນີ້:**

**ກ. ກວດພົບຢູ່ສະຖານທີ່ດ່ານສົ່ງອອກ**

- ຄັ້ງທີໜຶ່ງ 1 ຄັດອອກພືດ ທີ່ແຈ້ງປະລິມານ ຫຼື ນ້ຳໜັກ ທີ່ບໍ່ກົງກັບທີ່ແຈ້ງໃນຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກ ຫຼື ສົ່ງອອກຕໍ່;
- ຄັ້ງທີສອງ 2 ເມື່ອກະທຳຜິດຊ້ຳພາຍໃນເວລາສາມສິບວັນ (30) ນັບແຕ່ວັນກວດພົບຄັ້ງທີໜຶ່ງ (01) ໃຫ້ປະຕິເສດການອອກໃບຢັ້ງຢືນສຸຂານາໄມພືດ ສຳລັບການສົ່ງອອກ ຫຼື ສົ່ງອອກຕໍ່ ໃຫ້ກັບສິນຄ້າທັງໝົດ ແລະ ໃຫ້ຜູ້ສົ່ງອອກ ຫຼື ຜູ້ສົ່ງອອກຕໍ່ ຍື່ນໃບສະເໜີຄືນໃໝ່, ການສົ່ງອອກໃນຄັ້ງຕໍ່ໄປໃຫ້ໃຫ້ດຳເນີນການກວດຊຸດສິນຄ້າເຂັ້ມງວດ ແລະ ຖີ່ຂຶ້ນກວ່າເກົ່າ ເປັນເວລາສາມເດືອນ;
- ຄັ້ງທີສາມ 3 ເມື່ອກະທຳຄວາມຜິດຊ້ຳໃນໄລຍະການກວດສິນຄ້າ ຕິດຕໍ່ກັນສິບຄັ້ງເປັນເວລາສາມເດືອນ ໃຫ້ປະຕິເສດການອອກໃບຢັ້ງຢືນສຸຂານາໄມພືດ ສຳລັບການສົ່ງອອກ ຫຼື ສົ່ງອອກຕໍ່ ແລະ ໂຈະການອອກໃບຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກ ຫຼື ສົ່ງອອກຕໍ່ ເປັນເວລາສາມສິບວັນ ນັບແຕ່ເວລາກວດພົບ ພ້ອມທັງປັບໃໝຕາມລະບຽບກົດໝາຍ.

**ຂ. ກໍລະນີປະເທດນຳເຂົ້າແຈ້ງເຕືອນເປັນທາງການ**

- ຄັ້ງທີໜຶ່ງ 1 ເຮັດໜັງສືແຈ້ງເຕືອນບໍລິສັດຜູ້ສົ່ງອອກ ຫຼື ສົ່ງອອກຕໍ່ນັ້ນ;
- ຄັ້ງທີສອງ 2 ເມື່ອເຮັດຜິດຊ້ຳພາຍໃນເວລາສາມສິບວັນ ນັບຈາກວັນທີທີ່ໄດ້ຮັບການແຈ້ງເຕືອນຄັ້ງທີໜຶ່ງ ໃຫ້ໂຈະການອອກໃບຢັ້ງຢືນສຸຂານາໄມພືດ ສຳລັບການສົ່ງອອກ ແລະ ສົ່ງອອກຕໍ່ ໃຫ້ແກ່ຜູ້ສົ່ງອອກ ຫຼື ຜູ້ສົ່ງອອກຕໍ່ນັ້ນ ເປັນເວລາ ສາມເດືອນ;

**3. ກວດພົບສັດຕູພືດກັກກັນໃນກໍລະນີດັ່ງນີ້:**

**ກ. ກວດພົບຢູ່ສະຖານທີ່ລົງກວດກາສິນຄ້າ**

- ກໍລະນີກວດພົບສັດຕູພືດກັກກັນຂອງປະເທດນຳເຂົ້າ ແມ່ນໃຫ້ຄັດພືດທີ່ພົບສັດຕູພືດອອກທັງໝົດ ແລະ ອອກໃບຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກ ຫຼື ສົ່ງອອກຕໍ່ ໃຫ້ກັບພືດທີ່ເຫຼືອ;

**ຂ. ກໍລະນີປະເທດນຳເຂົ້າໄດ້ແຈ້ງເຕືອນເປັນທາງການ**

- ຄັ້ງທີໜຶ່ງ 1 ເຮັດໜັງສືແຈ້ງເຕືອນຜູ້ສົ່ງອອກ ຫຼື ຜູ້ສົ່ງອອກຕໍ່ນັ້ນ;
- ຄັ້ງທີສອງ 2 ເມື່ອເຮັດຜິດຊໍ້າພາຍໃນເວລາສາມສິບວັນ ນັບຈາກວັນທີ ທີ່ໄດ້ຮັບການແຈ້ງເຕືອນຄັ້ງທີໜຶ່ງ ໃຫ້ເຈົ້າໜ້າທີ່ກັກກັນພືດໃຫ້ຄຳແນະນຳໃນການຄັດສິນຄ້າ ແລະ ກວດສັດຕູພືດ ທີ່ໂຮງເຮືອນຫຸ້ມຫໍ່ຂອງຜູ້ສົ່ງອອກ ຫຼື ສົ່ງອອກຕໍ່;
- ຄັ້ງທີ 3 ແລະ ຄັ້ງຕໍ່ໄປເມື່ອເກີດຊໍ້າພາຍໃນເວລາສາມສິບວັນ ນັບຈາກວັນທີທີ່ມີໜັງສືແຈ້ງເຕືອນໃນຄັ້ງທີສອງໃຫ້ໂຈະການອອກໃບຢັ້ງຢືນສຸຂານາໄມພືດ ສຳລັບການສົ່ງອອກ ຫຼື ສົ່ງອອກຕໍ່ ຈາກສະຖານທີ່ປະກອບການຜະລິດເປັນເວລາສິບຫ້າວັນ ຈົນກ່ວາໄດ້ຮັບການປັບປຸງ ແລະ ແກ້ໄຂຈຶ່ງສາມາດສົ່ງອອກ ຫຼື ສົ່ງອອກຕໍ່ໄດ້.

## IV. ແບບຟອມ ແລະ ວິທີການພິມໃບຢັ້ງຢືນສຸຂານາໄມພືດ ສຳຫຼັບການສົ່ງອອກ ແລະ ສົ່ງອອກຕໍ່

ແບບຟອມໃບຢັ້ງຢືນສຸຂານາໄມພືດສຳລັບການສົ່ງອອກ ແມ່ນນຳໃຊ້ແບບຟອມໃບຢັ້ງຢືນສຸຂານາໄມພືດ ທີ່ກຳນົດໄວ້ໃນມາດຕະຖານສາກົນດ້ານມາດຕະການສຸຂານາໄມພືດ ສະບັບທີ 12 (ISPM 12), (ເອກະສານຊ້ອນທ້າຍ 03 ແລະ 04);

ແບບຟອມໃບຢັ້ງຢືນສຸຂານາໄມພືດ ສຳລັບການສົ່ງອອກຕໍ່ ແມ່ນນຳໃຊ້ແບບຟອມໃບຢັ້ງຢືນສຸຂານາໄມພືດ ທີ່ກຳນົດໄວ້ໃນມາດຕະຖານສາກົນດ້ານມາດຕະການສຸຂານາໄມພືດ ສະບັບທີ 12 (ISPM 12) (ເອກະສານຊ້ອນທ້າຍ 5 ແລະ 6).

ການພິມໃບຢັ້ງຢືນສຸຂານາໄມພືດ ແມ່ນນຳໃຊ້ໂປແກມອອກໃບຢັ້ງຢືນສຸຂານາໄມພືດ National Phytosanitary Database (NPD) ເຊິ່ງແມ່ນກົມປູກຝັງເປັນຜູ້ຄຸ້ມຄອງ ແລະ ຕິດຕັ້ງໂປແກຣມອອກໃບຢັ້ງຢືນສຸຂານາໄມພືດໃຫ້ແກ່ ຂະແໜງປູກຝັງແຂວງ, ນະຄອນຫຼວງ ຫຼື ຂະແໜງກັກກັນພືດປະຈຳດ່ານຊາຍແດນສາກົນ ທີ່ໄດ້ຮັບມອບສິດ ນຳໃຊ້ໂປແກຣມຈາກກົມປູກຝັງ, ກະຊວງ ກະສິກຳ ແລະ ປ່າໄມ້;

## V. ການລົງລາຍເຊັນໃສ່ໃບຢັ້ງຢືນສຸຂານາໄມພືດ ແລະ ການນຳໃຊ້ໂປແກຣມ ອອກໃບຢັ້ງຢືນສຸຂານາໄມພືດ

ພະນັກງານ ຫຼື ເຈົ້າໜ້າທີ່ກັກກັນພືດ ຜູ້ມີສິດລົງລາຍເຊັນໃສ່ໃບຢັ້ງຢືນສຸຂານາໄມພືດ ແມ່ນໄດ້ຮັບການສະເໜີເຫັນດີຈາກກົມປູກຝັງ ເພື່ອສະເໜີ ຂໍອະນຸມັດອອກຂໍ້ຕົກລົງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ໃນແຕ່ລະໄລຍະ.

ພະນັກງານ ຫຼື ເຈົ້າໜ້າທີ່ກັກກັນພືດ ຜູ້ມີສິດນຳໃຊ້ໂປແກຣມອອກໃບຢັ້ງຢືນສຸຂານາໄມພືດ ແມ່ນຕ້ອງໄດ້ຜ່ານການຝຶກອົບຮົມນຳພະແນກກັກກັນພືດ, ກົມປູກຝັງ ກ່ຽວກັບວິທີການນຳໃຊ້ໂປແກຣມ ອອກໃບຢັ້ງຢືນສຸຂານາໄມພືດ ແລະ ໄດ້ຮັບການແຕ່ງຕັ້ງຈາກຂະແໜງປູກຝັງ ແຂວງ, ນະຄອນຫຼວງ,

ດັ່ງນັ້ນ, ກົມປູກຝັງ ຈຶ່ງອອກບົດແນະນຳ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນສູງ

**ຫົວໜ້າ ກົມປູກຝັງ**

ປອ. ສຸລາພອນ ອິນທະວົງ

ເອກະສານຊ້ອນທ້າຍ 01

| |
|---|
| ກກພ 01 |
| PQD 01 |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

Lao People's Democratic Republic

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

Peace Independence Democracy Unity Prosperity

ກົມປູກຝັງ (Department of Agriculture)
ຂະແໜງປູກຝັງ ນະຄອນຫລວງ / ແຂວງ (Provincial Agriculture Section)……………………………
(ໃຊ້ສະເພາະເຈົ້າໜ້າທີ່ Official use only)

ເລກທີຮັບເອກະສານ…………………………
ວັນທີ ……………………………………

# ໃບຄຳຮ້ອງຂໍໃບຢັ້ງຢືນສຸຂານາໄມພືດ

**(Application form for issuing Phytosanitary Certificate)**

**ຮຽນ:** ທ່ານ ຫົວໜ້າຂະແໜງປູກຝັງແຂວງ ……………………………………………
(Head of Provincial Agriculture Section):

ຊື່ ແລະ ນາມສະກຸນຜູ້ຮ້ອງຂໍ(Name of applicant):……………………………………………………………………

ບ່ອນຢູ່ປະຈຸບັນ(Present address): ບ້ານ(Village):………………………ເຮືອນເລກທີ(House No):……….. ໜ່ວຍ(Unit):…………

ເມືອງ(District):…………………………ແຂວງ(Province)……………………………ເບີໂທລະສັບ(Telephone No):………………

Fax:……………………………… Email:……………………………………………………………………………

1. ຊື່ ແລະ ທີ່ຢູ່ ຂອງ ບໍລິສັດສົ່ງອອກພືດ ແລະ ຜະລິດຕະພັນພືດ(Name and address of exporter's company):…………………………
……………………………………………………………………………………………………………
……………………………………………………………………………………………………………
ດ່ານສົ່ງອອກ(Declared point of exit): ……………………………ວັນທີສົ່ງອອກ(Date of consignment's export):………………
ປະເທດ ແລະ ດ່ານ ທີ່ຈະສົ່ງຜ່ານ (Country and declared point of transit): ………………………………………………………
ເລກທີໃບອະນຸຍາດນຳເຂົ້າຂອງປະເທດຄູ່ຄ້າ (Import permit No.): ………………………
2. ຊື່ ແລະ ທີ່ຢູ່ ຂອງ ບໍລິສັດນຳເຂົ້າພືດ ແລະ ຜະລິດຕະພັນພືດ(Name and address of importer's company):…………………………
……………………………………………………………………………………………………………
……………………………………………………………………………………………………………
ດ່ານນຳເຂົ້າ(Declared point of entry):…………………………………………………………………………
3. ວິທີການຂົນສົ່ງ(Declared means of conveyance): ☐ ທາງບົກ(Road); ☐ ທາງນ້ຳ(Sea); ☐ ທາງອາກາດ(Air); ☐ ທາງລົດໄຟ(Rail); ☐ ທາງໄປສະນີ(Mail); ☐ ຕິດຕົວຜູ້ໂດຍສານ (Passenger).
4. ວິທີການບຳບັດ (Treatment Method): ☐ ໃຊ້ສານເຄມີ Chemical; ☐ ອົບອາຍນ້ຳ Vapour Heat; ☐ ຄວາມເຢັນ Cold Treatment; ☐ ສາຍແສງ Irradiation; ☐ ວິທີການອື່ນໆ Other (Specify)………………………………………………
5. ຈຸດປະສົງຂອງການສົ່ງອອກພືດ ແລະ ຜະລິດຕະພັນພືດ(Purpose of export for): ☐ ເພື່ອການຄ້າ (Trade); ☐ ເພື່ອການບໍລິໂພກ(Consumption); ☐ ເພື່ອການປຸງແຕ່ງ (Processing); ☐ ເພື່ອປ້ອນໂຮງງານ (Factory); ☐ ເພື່ອເປັນຕົວຢ່າງສິນຄ້າ ຫລື ວາງສະແດງ(Sample/exhibition); ☐ ເພື່ອຄົ້ນຄວ້າທົດລອງ-ວິໄຈ (Research/laboratory testing)

ເຈົ້າໜ້າທີ່ກັກກັນພືດ
(Name and signature of Plant Quarantine officer)

ຜູ້ສະເໜີ
(Name and signature of applicant)

ວັນທີ(date)……………………

ວັນທີ (date)……………

**ໝາຍເຫດ (Remark):**

- ກະລຸນາໝາຍ [X] ໃສ່ບ່ອນທີ່ຕ້ອງການຕາມຈຸດປະສົງຂອງທ່ານ (Please insert cross [X] into appropriate box)
- ປະກອບເອກະສານໃຫ້ຄົບຖ້ວນຕາມລາຍການທີ່ລະບຸໄວ້ ໃນເອກະສານຄັດຕິດ(Please attach all documents as mentioned in check list below)

ເອກະສານຄັດຕິດ (Check list)

1. ໃບຄໍາຮ້ອງຂໍໃບຢັ້ງຢືນສຸຂານາໄມພືດ ຟອມ ກກພ 01 (Application form for issuing Phytosanitary certificate, **Form PQD 01**) ແລະບັນຊີຊຸດສິນຄ້າພືດ ຟອມ ກກພ 01.1 (List of Plants attached to Application form for issuing Phytosanitary Certificate, **Form PQD 01.1**)
2. ໃບຢັ້ງຢືນການກວດກາພືດ ແລະ ຜະລິດຕະພັນພືດ ຟອມ ກກພ 02 (Inspection report of consignment from plant quarantine authority, **Form PQD 02**)
3. ໃບຂໍອະນຸຍາດນໍາເຂົ້າ ໃນກໍລະນີແມ່ນພືດ ແລະ ຜະລິດຕະພັນພືດ ຕ້ອງຫ້າມ ນໍາເຂົ້າຂອງປະເທດປາຍທາງ (Import Permit certificate, in case of goods is prohibited items by the destination country)
4. ສໍາເນົາ ໃບອະນຸຍາດດໍາເນີນທຸລະກິດ ກະສິກໍາ (ກໍລະນີສົ່ງອອກເພື່ອການຄ້າ) (Copy of Agriculture Enterprise registration number (in case export for trade)
5. ໃບແຈ້ງລາຄາ (Invoice) ແລະ ໃບແຈ້ງລາຍການສິນຄ້າ (Packing List) ໃຫ້ລະບຸແຈ້ງ ກ່ຽວກັບ ລາຍລະອຽດຂອງພືດ ແລະ ຜະລິດຕະພັນພືດ ພ້ອມດ້ວຍຊື່ວິທະຍາສາດ; ຈໍານວນ ແລະ ວິທີການຫຸ້ມຫໍ່ (ດ້ວຍໄມ້, ແກັດເຈ້ຍ, ເປົາປ່ານ ແລະ ອື່ນໆ...); ນໍ້າໜັກສຸດທິ:......ນໍ້າໜັກລວມ:.....ມູນຄ່າ:..........ເຄື່ອງໝາຍທີ່ພົ້ນເດັ່ນ(Invoice and Packing list please provide details description of consignment include scientific name, number and description of packages ( such as using wood material , paper carton , woolen for packing, etc.....) Net weight......., Gross weight......., Price...... and Distinguishing Marks).
6. ໃບຢັ້ງຢືນການຣົມຢາຂ້າເຊື້ອ ຫລື ການເຮັດອານາໄມ (ກໍລະນີເງື່ອນໄຂຂອງປະເທດປາຍທາງກໍານົດ)(Fumigation certificate, if consignment has been implemented)
7. ໃບຢັ້ງຢືນ CITES (ກໍລະນີແມ່ນພືດ, ຜະລິດຕະພັນເຄື່ອງປ່າຂອງດົງ ແລະ ສິ່ງຕ້ອງຫ້າມສົ່ງອອກຂອງປະເທດຕົ້ນທາງ) (CITES certificate, in case of goods are prohibited or regulated items of export country)

ກກພ 01.1
PQD 01.1

# ບັນຊີລາຍຊື່ຊຸດສິນຄ້າພືດ
# ເອກະສານຊ້ອນທ້າຍໃບຄໍາຮ້ອງຂໍໃບຢັ້ງຢືນສຸຂານາໄມພືດ

(List of Plants attached to Application form for issuing Phytosanitary Certificate)

| ລ/ດ<br>No. | ຊື່ວິທະຍາສາດ<br>Scientific name of Plants | ປະລິມານ<br>Quantity. | ຫົວໜ່ວຍ<br>Unit | ມູນຄ່າ<br>Value | ຈໍານວນພາຊະນະບັນຈຸ ຫຸ້ມຫໍ່<br>Number of packages |
|---|---|---|---|---|---|
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |

ຂ້າພະເຈົ້າຂໍຢັ້ງຢືນວ່າຂໍ້ມູນດັ່ງກ່າວຂ້າງເທິງແມ່ນຖືກຕ້ອງ
I hereby declare that information given above is correct

ຜູ້ສະເໜີ
(Name and signature of applicant)

ກກພ 02
PQD 02

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
Lao People's Democratic Republic
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
Peace Independence Democracy Unity Prosperity

---

ກົມປູກຝັງ (Department of Agriculture)
ຂະແໜງປູກຝັງ ນະຄອນຫລວງ/ແຂວງ( Provincial Agriculture Section):…………………………

ເລກທີ(Ref. No):……………/
ວັນທີ(date):…………………..

## ໃບຢັ້ງຢືນການກວດກາພືດ ແລະ ຜະລິດຕະພັນພືດ(Inspection sheet of consignment)

**ຮຽນ**: ທ່ານຫົວໜ້າຂະແໜງປູກຝັງແຂວງ……………………………………………………………
**ເລື້ອງ**: ສະຫລຸບຜົນການກວດກາພືດ ແລະ ຜະລິດຕະພັນພືດຕົວຈິງເພື່ອການສົ່ງອອກ(Subject: Report of inspection consignment).

- ອີງຕາມ ໃບສະເໜີຂອງບໍລິສັດ/ຜູ້ສົ່ງອອກເລກທີ: …………… ລົງວັນທີ: …………..(Application form of exporter Ref. No:………………and date):……………………………………………………………………………………

ຜ່ານການກວດກາພືດ ແລະ ຜະລິດຕະພັນພືດຕົວຈິງສາມາດຢັ້ງຢືນໄດ້ດັ່ງນີ້ (Through inspection of plants and plant products that can be verified as follows):

1. ຊື່ບໍລິສັດຜູ້ສົ່ງອອກ(Name of Exporter's company):……………………………………………………………………
2. ຊື່ບໍລິສັດ ແລະ ປະເທດ ນຳເຂົ້າ(Name of Importer's company):………………………………………………………
3. ຊື່ຂອງພືດ ແລະ ຜະລິດຕະພັນພືດ (Name of plants and plant products):…………………………………………………
   ຊື່ວິທະຍາສາດ(Scientific name):……………………………………………….ຈຳນວນ(Quantity):…………………………
4. ສະຖານທີ່ເກັບຕົວຢ່າງ(Location of sampling site):…………………………….ວັນທີເກັບຕົວຢ່າງ(Date of sampling):……………
   ຈຳນວນຕົວຢ່າງ (Number of sampling):……………………ນ້ຳໜັກຕໍ່ຕົວຢ່າງ(Weight per sampling):………………………………
5. ວິທີການກວດກາ (Method of inspection): ☐ ດ້ວຍຕາເປົ່າ(Visual); ☐ ດ້ວຍການລ້າງ/ແຍກ (Washing/Extraction);
   ☐ ນຳໃຊ້ເຄື່ອງ ELISA; ☐ ນຳໃຊ້ການວິໄຈທາງພັນທຸກຳ (Molecular methods e.g PCR); ☐ ວິທີການອື່ນໆ (Others)……………
6. ວິທີການບຳບັດ (Treatment Method): ☐ ໃຊ້ສານເຄມີ Chemical; ☐ ອົບອາຍນ້ຳ Vapour Heat; ☐ ຄວາມເຢັນ Cold Treatment;
   ☐ ສາຍແສງ Irradiation; ☐ ວິທີການອື່ນໆ Other (Specify)…………………………………………………………
7. ຜົນຂອງການກວດກາ(Result of inspection): ☐ ບໍ່ພົບສັດຕູພືດທີ່ໃຫ້ຢັ້ງຢືນ(Not found identified pest); ☐ ພົບສັດຕູພືດທີ່ໃຫ້ຢັ້ງຢືນ(Found identified pest); ☐ ພົບສັດຕູພືດອື່ນໆເຊັ່ນ(Found other pests):…………………………………………………
6. ການອອກໃບຢັ້ງຢືນສຸຂານາໄມພືດ(Issue phytosanitary certificate): ☐ ເຫັນດີ(Agreed); ☐ ບໍ່ເຫັນດີ(Disagree);
   ☐ ຕ້ອງຜ່ານການຂ້າເຊື້ອເສຍກ່ອນ(Must be disinfected); ☐ ອື່ນໆ (Other):…………………………………………………

ຂ້າພະເຈົ້າຂໍຮັບປະກັນ ແລະ ຢັ້ງຢືນວ່າທຸກຂໍ້ຄວາມທີ່ໄດ້ບັນທຶກຂ້າງເທິງນີ້ ແມ່ນມີຄວາມຈິງທຸກຢ່າງ. ດັ່ງນັ້ນ, ຈຶ່ງລາຍງານມາຍັງທ່ານເພື່ອຊາບ (I ensure and certify that the information recorded above is true).

| ເຈົ້າໜ້າທີ່ກັກກັນພືດ | ເຈົ້າຂອງສິນຄ້າ |
|---|---|
| (Name and signature of Plant quarantine authority) | (Name and signature of Customer) |

1. ……………………
2. ……………………
3. ……………………

ກກພ 03
PQD 03

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
Lao People's Democratic Republic
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
Peace Independence Democracy Unity Prosperity

ກົມປູກຝັງ (Department of Agriculture)
ຂະແໜງປູກຝັງ ນະຄອນຫລວງ / ແຂວງ (Provincial Agriculture Section)....................................
(ໃຊ້ສະເພາະເຈົ້າໜ້າທີ່ Official use only)

ເລກທີຮັບເອກະສານ............................
ວັນທີ ........................................

# ໃບຄໍາຮ້ອງຂໍໃບຢັ້ງຢືນສຸຂານາໄມພືດສໍາລັບສົ່ງອອກຕໍ່

**(Application form for issuing Phytosanitary certificate for Re-export)**

**ຮຽນ**: ທ່ານ ຫົວໜ້າຂະແໜງປູກຝັງແຂວງ ..................................................
(Head of Provincial Agriculture Section):

ຊື່ ແລະ ນາມສະກຸນຜູ້ຮ້ອງຂໍ(Name of applicant):..........................................................................................
ບ່ອນຢູ່ປະຈຸບັນ(Present address): ບ້ານ(Village):.....................................ເຮືອນເລກທີ(House No):........... ໜ່ວຍ(Unit):............
ເມືອງ(District):...............................ແຂວງ(Province).....................................ເບີໂທລະສັບ(Telephone No):....................
Fax:.................................... Email:..........................................................................................

1) ຊື່ ແລະ ທີ່ຢູ່ ຂອງ ບໍລິສັດສົ່ງອອກພືດ ແລະ ຜະລິດຕະພັນພືດ(Name and address of exporter's company):..................................
..........................................................................................................................
..........................................................................................................................
ດ່ານນໍາເຂົ້າກ່ອນຂໍສົ່ງອອກຕໍ່(Previously imported point of entry) ..........................................................
ໃບອະນຸຍາດນໍາເຂົ້າຂອງສປປ ລາວເລກທີ(Imported permit no. of Lao PDR) ................................................
ດ່ານສົ່ງອອກ(Declared point of exit): ...................................ວັນທີສົ່ງອອກ(Date of consignment's export):..........................
ປະເທດ ແລະ ດ່ານ ທີ່ຈະສົ່ງຜ່ານ (Country and declared point of transit): ..................................................

2) ຊື່ ແລະ ທີ່ຢູ່ ຂອງ ບໍລິສັດນໍາເຂົ້າພືດ ແລະ ຜະລິດຕະພັນພືດ(Name and address of importer's company):..................................
..........................................................................................................................
..........................................................................................................................
ດ່ານນໍາເຂົ້າ(Declared point of entry):..........................................................................................
ໃບອະນຸຍາດນໍາເຂົ້າຂອງປະເທດປາຍທາງ ເລກທີ(Imported permit no of destination country)..........................................

3) ວິທີການຂົນສົ່ງ(Declared means of conveyance): ☐ ທາງບົກ(Road); ☐ ທາງນໍ້າ(Sea); ☐ ທາງອາກາດ(Air); ☐ ທາງລົດໄຟ(Rail); ☐ ທາງໄປສະນີ(Mail); ☐ ຕິດຕົວຜູ້ໂດຍສານ (Passenger).

4) ລາຍລະອຽດຂອງຊຸດສິນຄ້າ (Description of consignment): ☐ ໄດ້ຫຸ້ມຫໍ່ຄືນໃໝ່ (Repacked) ☐ ຊຸດສິນຄ້າເກັບຢູ່ຕູ້ຄອນເທນເນີແບບເດີມຈາກປະເທດຕົ້ນທາງ/ຕູ້ເກັບຄືເກົ່າ (In original container) ☐ ຊຸດສິນຄ້າເກັບຢູ່ຕູ້ຄອນເທນເນີໃໝ່/ຕູ້ເກັບສິນຄ້າໃໝ່ (In new container) ☐ ວິທີການອື່ນໆ Other (Specify) ..........................................................

5) ວິທີການບໍາບັດ (Treatment Method): ☐ ໃຊ້ສານເຄມີ Chemical; ☐ ອົບອາຍນໍ້າ Vapour Heat; ☐ ຄວາມເຢັນ Cold Treatment; ☐ ສາຍແສງ Irradiation; ☐ ວິທີການອື່ນໆ Other (Specify)..........................................................

6) ຈຸດປະສົງຂອງການສົ່ງອອກຕໍ່ ພືດ ແລະ ຜະລິດຕະພັນພືດ(Purpose of re-export for): ☐ ເພື່ອການຄ້າ (Trade); ☐ ເພື່ອການບໍລິໂພກ(Consumption); ☐ ເພື່ອການປຸງແຕ່ງ (Processing); ☐ ເພື່ອປ້ອນໂຮງງານ (Factory); ☐ ເພື່ອເປັນຕົວຢ່າງສິນຄ້າ ຫລື ວາງສະແດງ(Sample/exhibition); ☐ ເພື່ອຄົ້ນຄວ້າທົດລອງ-ວິໄຈ (Research/laboratory testing)

| | |
|---|---|
| ເຈົ້າໜ້າທີ່ກັກກັນພືດ | ຜູ້ສະເໜີ |
| (Name and signature of Plant Quarantine officer) | (Name and signature of applicant) |

ວັນທີ(Date)..........................

ວັນທີ(Date)............................

**ໝາຍເຫດ (Remark):**

- ກະລຸນາໝາຍ [X] ໃສ່ບ່ອນທີ່ຕ້ອງການຕາມຈຸດປະສົງຂອງທ່ານ (Please insert cross [X] into appropriate box)
- ປະກອບເອກະສານໃຫ້ຄົບຖ້ວນຕາມລາຍການທີ່ລະບຸໄວ້ ໃນເອກະສານຄັດຕິດ (Please attach all documents as mentioned in check list below)

ເອກະສານຄັດຕິດ (Check list)

1. ໃບຄໍາຮ້ອງຂໍໃບຢັ້ງຢືນສຸຂານາໄມພືດສໍາລັບສິ່ງອອກຕໍ່(Application form for issuing Re-export certificate) **Form ກກພ 03, PQD 03**
2. ໃບຢັ້ງຢືນການກວດກາພືດ ແລະ ຜະລິດຕະພັນພືດ ສໍາລັບສິ່ງອອກຕໍ່ (Inspection sheet of consignment for re-export) **Form ກກພ 04, PQD 04**
3. ໃບຢັ້ງຢືນສຸຂານາໄມພືດສະບັບຕົ້ນທີ່ຕິດມານໍາສິນຄ້າ (Phytosanitary Certificate original) ແລະ ເອກະສານສະບັບຕົ້ນທັງໝົດທີ່ອອກໃຫ້ໂດຍປະເທດຕົ້ນທາງ
4. ໃບຂໍອະນຸຍາດນໍາເຂົ້າ ໃນກໍລະນີແມ່ນ ພືດ ແລະ ຜະລິດຕະພັນພືດຈາກ ສປປ ລາວ (ພືດຄວບຄຸມ/ວັດຖຸຕ້ອງຄວບຄຸມທີ່ມີຄວາມສ່ຽງສູງ ຂອງປະເທດລາວ (Import Permit certificate of Lao PDR)
5. ສໍາເນົາ ໃບອະນຸຍາດດໍາເນີນທຸລະກິດ ກະສິກໍາ (ກໍລະນີສິ່ງອອກເພື່ອການຄ້າ)(Copy of Agriculture Enterprise registration number (in case export for trade)

| ກກພ 04 |
|---|
| PQD 04 |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

Lao People's Democratic Republic

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

Peace Independence Democracy Unity Prosperity

ກົມປູກຝັງ (Department of Agriculture)

ຂະແໜງປູກຝັງ ນະຄອນຫລວງ/ແຂວງ(Provincial Agriculture Section):............................ ເລກທີ(Ref. No):............./

ວັນທີ(Date):.....................

# ໃບຢັ້ງຢືນການກວດກາພືດ ແລະ ຜະລິດຕະພັນພືດ ສຳລັບສົ່ງອອກຕໍ່

**(Inspection sheet of consignment for re-export)**

**ຮຽນ**: ທ່ານຫົວໜ້າຂະແໜງປູກຝັງແຂວງ.............................................................................

**ເລື່ອງ**: ສະຫລຸບຜົນການກວດກາພືດ ແລະ ຜະລິດຕະພັນພືດຕົວຈິງເພື່ອການສົ່ງອອກຕໍ່ (Subject: Report of inspection consignment).

- ອີງຕາມ ໃບສະເໜີຂອງບໍລິສັດ/ຜູ້ສົ່ງອອກເລກທີ:..............ລົງວັນທີ:..................(Application form of exporter Ref. No:...................and date):.................................................................................................................................

ຜ່ານການກວດກາພືດ ແລະ ຜະລິດຕະພັນພືດຕົວຈິງສາມາດຢັ້ງຢືນໄດ້ດັ່ງນີ້ (Through inspection of plants and plant products that can be verified as follows):

1) ຊື່ບໍລິສັດຜູ້ສົ່ງອອກ(Name of Exporter's company):.......................................................................................

2) ຊື່ບໍລິສັດ ແລະ ປະເທດ ນຳເຂົ້າ(Name of Importer's company):................................................................................

3) ຊື່ຂອງພືດ ແລະ ຜະລິດຕະພັນພືດ(Name of plants and plant products):...........................................................................

ຊື່ວິທະຍາສາດ(Scientific name):.........................................................ຈຳນວນ(Quantity):....................................

4) ລາຍລະອຽດຂອງຊຸດສິນຄ້າ (Description of consignment):

ກະລຸນາໝາຍ X ໃສ່ໃນບອກໃຫ້ຖືກຕ້ອງຕາມຄວາມເໝາະສົມ (Please insert cross x into appropriate box)

☐ ໃບຢັ້ງຢືນສຸຂານາໄມພືດຈາກປະເທດຕົ້ນທາງ (Phytosanitary Certificate original)

☐ ໄດ້ຫຸ້ມຫໍ່ຄືນໃໝ່ (Repacked)

☐ ຊຸດສິນຄ້າເກັບຢູ່ຕູ້ຄອນເທນເນີແບບເດີມຈາກປະເທດຕົ້ນທາງ/ຕູ້ເກັບຄືເກົ່າ (In original container)

☐ ຊຸດສິນຄ້າເກັບຢູ່ຕູ້ຄອນເທນເນີໃໝ່/ຕູ້ເກັບສິນຄ້າໃໝ່ (In new container)

☐ ກວດກາຊຸດສິນຄ້າເພີ່ມຕື່ມ ເພື່ອໃຫ້ສອດຄ່ອງກັບເງື່ອນໄຂຂອງປະເທດປາຍທາງ ໂດຍສະເພາະສັດຕູພືດກັກກັນ/ຄວບຄຸມ (Additional inspection for Phytosanitary import requirements especially quarantine pests)

ກ) ສະຖານທີ່ເກັບຕົວຢ່າງ(Location of sampling site):...................ວັນທີເກັບຕົວຢ່າງ(Date of sampling):...................

ຈຳນວນຕົວຢ່າງ(Number of sampling):...........ນ້ຳໜັກຕໍ່ຕົວຢ່າງ(Weight per sampling):.................................

ຂ) ວິທີການກວດກາແລະທົດສອບ(Method of inspection and testing): ☐ ດ້ວຍຕາເປົ່າ(Visual);

☐ ດ້ວຍການລ້າງ/ແຍກ (Washing/Extraction); ☐ ນຳໃຊ້ເຄື່ອງ ELISA; ☐ນຳໃຊ້ການວິໄຈທາງພັນທຸກຳ (Molecular methods e.g PCR)

ຄ) ຜົນຂອງການກວດກາ(Result of inspection): ☐ບໍ່ພົບສັດຕູພືດທີ່ໃຫ້ຢັ້ງຢືນ(Not found identified pest);

☐ ພົບສັດຕູພືດທີ່ໃຫ້ຢັ້ງຢືນ(Found identified pest); ☐ພົບສັດຕູພືດອື່ນໆເຊັ່ນ(Found other pests):..............

5) ວິທີການບຳບັດ (Treatment Method): ໃຊ້ສານເຄມີ Chemical; ອົບອາຍນ້ຳ Vapour Heat; ຄວາມເຢັນ Cold Treatment;

☐ ສາຍແສງ Irradiation; ☐ ວິທີການອື່ນໆ Other (Specify).....................................................................

6) ການອອກໃບຢັ້ງຢືນສຸຂານາໄມພືດສຳລັບສົ່ງອອກຕໍ່(Issue phytosanitary certificate for re-export): ☐ ເຫັນດີ(Agreed);

☐ ບໍ່ເຫັນດີ(Disagree); ☐ ຕ້ອງຜ່ານການຂ້າເຊື້ອເສຍກ່ອນ(Must be disinfected); ☐ອື່ນໆ (Other):..............................

ຂ້າພະເຈົ້າຂໍຮັບປະກັນ ແລະ ຢັ້ງຢືນວ່າທຸກຂໍ້ຄວາມທີ່ໄດ້ບັນທຶກຂ້າງເທິງນີ້ ແມ່ນມີຄວາມຈິງທຸກຢ່າງ. ດັ່ງນັ້ນ, ຈຶ່ງລາຍງານມາຍັງທ່ານເພື່ອຊາບ

(I ensure and certify that the information recorded above is true).

ເຈົ້າໜ້າທີ່ກັກກັນພືດ

(Name and signature of Plant quarantine authority)

ເຈົ້າຂອງສິນຄ້າ

(Name and signature of Customer)

1. ........................
2. ........................
3. ........................

ເອກະສານຊ້ອນທ້າຍ 03

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
LAO PEOPLE'S DEMOCRATIC REPUBLIC
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
PEACE INDEPENDENCE DEMOCRACY UNITY PROSPERITY

MINISTRY OF AGRICULTURE AND FORESTRY
DEPARTMENT OF AGRICULTURE

**ORIGINAL**

# ໃບຢັ້ງຢືນ ສຸຂານາໄມພືດ
# PHYTOSANITARY CERTIFICATE

| ຈາກ:<br>FROM: | ເຖິງ:<br>TO: |
|---|---|

## I. ປະເພດສິນຄ້າ / DESCRIPTION OF CONSIGNMENT

| ຊື່ ແລະ ທີ່ຢູ່ ຂອງ ຜູ້ສົ່ງອອກ<br>Name and address of exporter | | ຊື່ ແລະ ທີ່ຢູ່ ຂອງ ຜູ້ຮັບ<br>Declared name and address of consignee |
|---|---|---|
| | | |
| ຈຳນວນ ແລະ ລັກສະນະການຫຸ້ມຫໍ່<br>Number and description of packages | | ເຄື່ອງໝາຍທີ່ເດັ່ນ<br>Distinguishing marks |
| | | |
| ແຫຼ່ງທີ່ມາ ຂອງ ສິນຄ້າ<br>Place of origin | ວິທີການຂົນສົ່ງ<br>Declared means of conveyance | ຈຸດແຈ້ງ ການນຳເຂົ້າ<br>Declared point of entry |
| | | |
| ຊື່ ຂອງ ສິນຄ້າ ແລະ ຈຳນວນທີ່ແຈ້ງ<br>Name of product and quantity declared | | ຊື່ວິທະຍາສາດ ຂອງ ພືດ<br>Botanical name of plants |
| | | |

ຂໍຢັ້ງຢືນວ່າ ພືດ ແລະ ຜະລິດຕະພັນພືດ ຫຼື ວັດຖຸອື່ນຂ້າງເທິງນັ້ນ ໄດ້ຜ່ານການກວດກາ ແລະ ພົບວ່າ ປອດສັດຕູພືດຕ້ອງຫ້າມ ແລະ ສັດຕູພືດອື່ນໆ ທີ່ເປັນອັນຕະລາຍ ຊຶ່ງສອດຄ່ອງກັບ ລະບຽບການປ້ອງກັນພືດ ຂອງ ປະເທດ ທີ່ນຳເຂົ້າ.

This is to certify that the plant and plant products or other regulated articles described herein have been inspected and/or tested according to appropriate official procedures and are considered to be free from the quarantine pests specified by the importing contracting party and to conform with the current phytosanitary requirements of the importing contracting party, including those for regulated non-quarantine pest.

## II. ແຈ້ງເພີ່ມເຕີມ(ຖ້າມີ)/ ADDITIONAL DECLARATION

## III. ການເຮັດຄວາມສະອາດ ແລະ ການຂ້າເຊື້ອ/ DISINFESTATION AND/OR DISINFECTION TREATMENT

| ວັນທີ ເຮັດຄວາມສະອາດຂ້າເຊື້ອ<br>Treatment Date: | ວິທີເຮັດຄວາມສະອາດຂ້າເຊື້ອ<br>Treatment: |
|---|---|
| ສານເຄມີ (ສ່ວນປະກອບທີ່ອອກລິດ)<br>Chemical (Active ingredients): | ໄລຍະເວລາ ແລະ ອຸນຫະພູມ<br>Duration & temperature: |
| ຄວາມເຂັ້ມຂຸ້ນ<br>Concentration: | ຂໍ້ມູນເພີ່ມເຕີມ<br>Additional Information: |

| | | |
|---|---|---|
| ວັນທີ ກວດກາ<br>Date Inspected: | MINISTRY OF AGRICULTURE AND FORESTRY<br>PLANT QUARANTINE AUTHORITY OF LAO PDR<br>DEPARTMENT OF AGRICULTURE | ຊື່ ແລະ ລາຍເຊັນເຈົ້າໜ້າທີ່ປ້ອງກັນພືດ<br>Name and Signature of Authorized Officer |
| ວັນທີ ອອກໃບຢັ້ງຢືນ<br>Date Issued: | | |
| ສະຖານທີ່ ອອກໃບຢັ້ງຢືນ<br>Place of Issued: | | |

Department of Agriculture, P.O.Box:811, Vientiane, Lao PDR, Tel: (856) 21 412350 Fax: (856) 21 412349
Email: pqdlao@yahoo.com

№ 039268

ເອກະສານຊ້ອນທ້າຍ 04

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
LAO PEOPLE'S DEMOCRATIC REPUBLIC
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
PEACE INDEPENDENCE DEMOCRACY UNITY PROSPERITY

MINISTRY OF AGRICULTURE AND FORESTRY
DEPARTMENT OF AGRICULTURE

copy

# ໃບຢັ້ງຢືນ ສຸຂານາໄມພືດ
# PHYTOSANITARY CERTIFICATE

| ຈາກ:<br>FROM: | ເຖິງ:<br>TO: |
|---|---|

## I. ປະເພດສິນຄ້າ / DESCRIPTION OF CONSIGNMENT

| ຊື່ ແລະ ທີ່ຢູ່ ຂອງ ຜູ້ສົ່ງອອກ<br>Name and address of exporter | ຊື່ ແລະ ທີ່ຢູ່ ຂອງ ຜູ້ຮັບ<br>Declared name and address of consignee |
|---|---|
| | |
| ຈຳນວນ ແລະ ລັກສະນະການຫຸ້ມຫໍ່<br>Number and description of packages | ເຄື່ອງໝາຍທີ່ເດັ່ນ<br>Distinguishing marks |
| | |

| ແຫຼ່ງທີ່ມາ ຂອງ ສິນຄ້າ<br>Place of origin | ວິທີການຂົນສົ່ງ<br>Declared means of conveyance | ຈຸດແຈ້ງ ການນຳເຂົ້າ<br>Declared point of entry |
|---|---|---|
| | | |

| ຊື່ ຂອງ ສິນຄ້າ ແລະ ຈຳນວນທີ່ແຈ້ງ<br>Name of product and quantity declared | ຊື່ວິທະຍາສາດ ຂອງ ພືດ<br>Botanical name of plants |
|---|---|
| | |

ຂໍຢັ້ງຢືນວ່າ ພືດ ແລະ ຜະລິດຕະພັນພືດ ຫຼື ວັດຖຸອື່ນອີກທີ່ງນັ້ນ ໄດ້ຜ່ານການກວດກາ ແລະ ພົບວ່າ ປອດສັດຕູພືດຕ້ອງຫ້າມ ແລະ ສັດຕູພືດອື່ນໆ ທີ່ເປັນອັນຕະລາຍ ຊຶ່ງສອດຄ່ອງກັບ ລະບຽບການປ້ອງກັນພືດ ຂອງ ປະເທດ ທີ່ນຳເຂົ້າ.

This is to certify that the plant and plant products or other regulated articles described herein have been inspected and/or tested according to appropriate official procedures and are considered to be free from the quarantine pests specified by the importing contracting party and to conform with the current phytosanitary requirements of the importing contracting party, including those for regulated non-quarantine pest

## II. ແຈ້ງເພີ່ມເຕີມ(ຖ້າມີ)/ ADDITIONAL DECLARATION

## III. ການເຮັດຄວາມສະອາດ ແລະ ການຂ້າເຊື້ອ/ DISINFESTATION AND/OR DISINFECTION TREATMENT

| | |
|---|---|
| ວັນທີ ເຮັດຄວາມສະອາດຂ້າເຊື້ອ<br>Treatment Date: | ວິທີເຮັດຄວາມສະອາດຂ້າເຊື້ອ<br>Treatment: |
| ສານເຄມີ (ສ່ວນປະກອບທີ່ອອກລິດ)<br>Chemical (Active ingredients): | ໄລຍະເວລາ ແລະ ອຸນຫະພູມ<br>Duration & temperature: |
| ຄວາມເຂັ້ມຂຸ້ນ<br>Concentration: | ຂໍ້ມູນເພີ່ມເຕີມ<br>Additional Information: |

| | | |
|---|---|---|
| ວັນທີ ກວດກາ<br>Date Inspected: | MINISTRY OF AGRICULTURE AND FORESTRY<br>PLANT QUARANTINE AUTHORITY OF LAO PDR<br>DEPARTMENT OF AGRICULTURE | ຊື່ ແລະ ລາຍເຊັນເຈົ້າໜ້າທີ່ປ້ອງກັນພືດ<br>Name and Signature of Authorized Officer |
| ວັນທີ ອອກໃບຢັ້ງຢືນ<br>Date Issued: | | |
| ສະຖານທີ່ ອອກໃບຢັ້ງຢືນ<br>Place of Issued: | | |

Department of Agriculture, P.O.Box:811, Vientiane, Lao PDR. Tel: (856) 21 412350 Fax: (856) 21 412349
Email: pqdlao@yahoo.com

№ 039268

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
LAO PEOPLE'S DEMOCRATIC REPUBLIC
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
PEACE INDEPENDENCE DEMOCRACY UNITY PROSPERITY

MINISTRY OF AGRICULTURE AND FORESTRY
DEPARTMENT OF AGRICULTURE

ORIGINAL

# ໃບຢັ້ງຢືນ ສຸຂານາໄມພືດ ສຳຫລັບ ສົ່ງອອກຕໍ່
# PHYTOSANITARY CERTIFICATE FOR RE-EXPORT

| | |
|---|---|
| ເຖິງ: ອົງການປ້ອງກັນພືດ ແຫ່ງຊາດ<br>To: The National Plant Protection Organization of | |
| I. ລາຍລະອຽດສິນຄ້າ / DESCRIPTION OF CONSIGNMENT | |
| ຊື່ ແລະ ທີ່ຢູ່ ຂອງ ຜູ້ນຳເຂົ້າ (Name and address of Importer) | ຊື່ ແລະ ທີ່ຢູ່ ຂອງ ຜູ້ສົ່ງອອກ (Name and address of Exporter) |
| | |
| ຈຳນວນ ແລະ ລັກສະນະການຫຸ້ມຫໍ່ (Number and Description of Packages) | ເຄື່ອງໝາຍທີ່ເດັ່ນ (Distinguishing Marks) |
| | |

| | | |
|---|---|---|
| ແຫຼ່ງທີ່ມາ ຂອງ ສິນຄ້າ<br>Place of origin | ວິທີການຂົນສົ່ງ<br>Declared means of conveyance | ຈຸດແຈ້ງ ການນຳເຂົ້າ<br>Declared point of entry |
| | | |

| | |
|---|---|
| ຊື່ ຂອງ ສິນຄ້າ ແລະ ຈຳນວນທີ່ແຈ້ງ(Name of product and quantity declared) | ຊື່ວິທະຍາສາດ ຂອງ ພືດ(Botanical name of plants) |
| | |

ຂໍຢັ້ງຢືນວ່າ ພືດ ແລະ ຜະລິດຕະພັນພືດ ຫຼື ວັດຖຸອື່ນຂ້າງເທິງນັ້ນໄດ້ຜ່ານການກວດກາເບື້ອງຕົ້ນຂອງການນຳເຂົ້າປະເທດລາວ. (This is to certify that the plant and plant products described above were imported into Lao PDR from.......................................................................ໃບຢັ້ງຢືນສຸຂານາໄມພືດເລກທີ (covered by phytosanitary certificate No: .................................... ຕົ້ນສະບັບ(original) ຢັ້ງຢືນສຳເນົາແທ້ (certified true copy) ເອກະສານຄັດຕິດໃນໃບຢັ້ງຢືນສຸຂານາໄມພືດ (of which is attached to this certificate; ໄດ້ຫຸ້ມຫໍ່ມາແລ້ວ (that they are packed) ໄດ້ຫຸ້ມຫໍ່ຄືນໃໝ່ (repacked) ຕາມເດີມ (in original) ຕູ້ຄອນເທນເນີໃໝ່ (New container) ບົນພື້ນຖານຕົ້ນສະບັບຂອງໃບຢັ້ງຢືນສຸຂານາໄມພືດ (that base on original phytosanitary certificate) ກວດກາເພີ່ມເຕີມ (and additional inspection) ໄດ້ເຫັນວ່າສອດຄ່ອງກັບເງື່ອນໄຂລະບຽບການປ້ອງກັນພືດໃນປະຈຸບັນ ຂອງປະເທດນຳເຂົ້າ, ແລະ ໃນເວລາເກັບຮັກສາຢູ່ ສປປລາວ, ສິນຄ້ານີ້ບໍ່ໄດ້ກ່ຽວຂ້ອງກັບຄວາມສ່ຽງການຕິດແປດຂອງສັດຕູພືດ (They are considered to conform with the current phytosanitary requirements of the importing contracting party, and that during storage in Lao PDR, the consignment has not been subjected to risk of infestation or infection).

| |
|---|
| II. ແຈ້ງເພີ່ມເຕີມ(ຖ້າມີ)/ ADDITIONAL DECLARATION |
| |

| | |
|---|---|
| III. ການເຮັດຄວາມສະອາດ ແລະ ການຂ້າເຊື້ອ/ DISINFESTATION AND/OR DISINFECTION TREATMENT | |
| ວັນທີ ເຮັດຄວາມສະອາດຂ້າເຊື້ອ<br>Treatment Date: | ວິທີເຮັດຄວາມສະອາດຂ້າເຊື້ອ<br>Treatment: |
| ສານເຄມີ (ສ່ວນປະກອບທີ່ອອກລິດ)<br>Chemical (Active ingredients): | ໄລຍະເວລາ ແລະ ອຸນຫະພູມ<br>Duration & temperature: |
| ຄວາມເຂັ້ມຂຸ້ນ<br>Concentration: | ຂໍ້ມູນເພີ່ມເຕີມ<br>Additional Information: |

| | | |
|---|---|---|
| ວັນທີ ກວດກາ<br>Date Inspected: | | ຊື່ ແລະ ລາຍເຊັນເຈົ້າໜ້າທີ່ກັກກັນພືດ<br>Name and Signature of Authorized Officer |
| ວັນທີ ອອກໃບຢັ້ງຢືນ<br>Date Issued: | | |
| ສະຖານທີ່ອອກໃບຢັ້ງຢືນ<br>Place of Issued: | | |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
LAO PEOPLE'S DEMOCRATIC REPUBLIC
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
PEACE INDEPENDENCE DEMOCRACY UNITY PROSPERITY

MINISTRY OF AGRICULTURE AND FORESTRY
DEPARTMENT OF AGRICULTURE

**COPY**

# ໃບຢັ້ງຢືນ ສຸຂານາໄມພືດ ສຳຫລັບ ສົ່ງອອກຕໍ່
# PHYTOSANITARY CERTIFICATE FOR RE-EXPORT

| | | | |
|---|---|---|---|
| ເຖິງ: ອົງການປ້ອງກັນພືດ ແຫ່ງຊາດ<br>TO: The national Plant Protection organization of | | | |
| I. ລາຍລະອຽດສິນຄ້າ / DESCRIPTION OF CONSIGNMENT | | | |
| ຊື່ ແລະ ທີ່ຢູ່ ຂອງ ຜູ້ນຳເຂົ້າ (Name and address of importer) | | ຊື່ ແລະ ທີ່ຢູ່ ຂອງ ຜູ້ສົ່ງອອກ (Name and address of exporter) | |
| | | | |
| ຈຳນວນ ແລະ ລັກສະນະການຫຸ້ມຫໍ່ (Number and description of packages) | | ເຄື່ອງໝາຍທີ່ເດັ່ນ (Distinguishing marks) | |
| | | | |
| ແຫຼ່ງທີ່ມາ ຂອງ ສິນຄ້າ<br>Place of origin | ວິທີການຂົນສົ່ງ<br>Declared means of conveyance | ຈຸດແຈ້ງ ການນຳເຂົ້າ<br>Declared point of entry | |
| | | | |
| ຊື່ ຂອງ ສິນຄ້າ ແລະ ຈຳນວນທີ່ແຈ້ງ(Name of product and quantity declared) | | ຊື່ວິທະຍາສາດ ຂອງ ພືດ(Botanical name of plants) | |
| | | | |

ຂໍຢັ້ງຢືນວ່າ ພືດ ແລະ ຜະລິດຕະພັນພືດ ຫຼື ວັດຖຸອື່ນຂ້າງເທິງນັ້ນໄດ້ຜ່ານການກວດກາເບື້ອງຕົ້ນຂອງການນຳເຂົ້າປະເທດລາວ. (This is to certify that the plant and plant products described above were imported into Lao PDR from.......................................................................ໃບຢັ້ງຢືນສຸຂານາໄມພືດເລກທີ (covered by phytosanitary certificate No: ................................... ຕົ້ນສະບັບ(original) ຢັ້ງຢືນສຳເນົາແທ້ (certified true copy) ເອກະສານຄັດຕິດໃນໃບຢັ້ງຢືນສຸຂານາໄມພືດ (of which is attached to this certificate; ໄດ້ຫຸ້ມຫໍ່ມາແລ້ວ (that they are packed) ໄດ້ຫຸ້ມຫໍ່ຄືນໃໝ່ (repacked) ຕາມເດີມ (in original) ຕູ້ຄອນເທນເນີໃໝ່ (New container) ບົນພື້ນຖານຕົ້ນສະບັບຂອງໃບຢັ້ງຢືນສຸຂານາໄມພືດ (that base on original phytosanitary certificate) ກວດກາເພີ່ມເຕີມ (and additional inspection) ໄດ້ເຫັນວ່າສອດຄ່ອງກັບເງື່ອນໄຂລະບຽບການປ້ອງກັນພືດໃນປະຈຸບັນ ຂອງປະເທດນຳເຂົ້າ, ແລະ ໃນເວລາເກັບຮັກສາຢູ່ ສປປລາວ, ສິນຄ້ານີ້ບໍ່ໄດ້ກ່ຽວຂ້ອງກັບຄວາມສ່ຽງການຕິດແປດຂອງສັດຕູພືດ (They are considered to conform with the current phytosanitary requirements of the importing contracting party, and that during storage in Lao PDR, the consignment has not been subjected to risk of infestation or infection).

## II. ແຈ້ງເພີ່ມເຕີມ(ຖ້າມີ)/ ADDITIONAL DECLARATION

## III. ການເຮັດຄວາມສະອາດ ແລະ ການຂ້າເຊື້ອ/ DISINFESTATION AND/OR DISINFECTION TREATMENT

| | | |
|---|---|---|
| ວັນທີ ເຮັດຄວາມສະອາດຂ້າເຊື້ອ<br>Treatment Date: | ວິທີເຮັດຄວາມສະອາດຂ້າເຊື້ອ<br>Treatment: | |
| ສານເຄມີ (ສ່ວນປະກອບທີ່ອອກລິດ)<br>Chemical (Active ingredients): | ໄລຍະເວລາ ແລະ ອຸນຫະພູມ<br>Duration & temperature: | |
| ຄວາມເຂັ້ມຂຸ້ນ<br>Concentration: | ຂໍ້ມູນເພີ່ມເຕີມ<br>Additional Information: | |
| ວັນທີ ກວດກາ<br>Date Inspected: | | ຊື່ ແລະ ລາຍເຊັນເຈົ້າໜ້າທີ່ກັກກັນພືດ<br>Name and Signature of Authorized Officer |
| ວັນທີ ອອກໃບຢັ້ງຢືນ<br>Date Issued: | | |
| ສະຖານທີ່ອອກໃບຢັ້ງຢືນ<br>Place of Issued: | | |